ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 48 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 26.07.2018

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ), ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານວຽກອຳນວຍຄວາມສະດວກທາງດ້ານການຄ້າ ປີ 2017-2022, ເລກທີ 0051/ກຂອຄ, ລົງວັນທີ 25 ກັນຍາ 2017;
- ອີງຕາມໜັງສືສະເໜີ ສະບັບເລກທີ 0547/ອຄ, ລົງວັນທີ 08 ພຶດສະພາ 2018 ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1 :** ແຕ່ງຕັ້ງຄະນະກຳມະການຊີ້ນຳລວມອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ " ຄອຄສ ", ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງລຸ່ມນີ້:

1. ທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ — ເປັນຫົວໜ້າຄະນະ;
2. ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ — ເປັນຮອງຫົວໜ້າຄະນະ ແລະ ທັງເປັນຜູ້ປະຈຳການ;
3. ທ່ານ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ — ເປັນຮອງຫົວໜ້າຄະນະ;
4. ທ່ານ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ — ເປັນຮອງຫົວໜ້າຄະນະ ແລະ ເປັນຫົວໜ້າກອງເລຂາ;
5. ທ່ານ ຮອງລັດຖະມົນຕີກະຊວງການເງິນ — ເປັນຄະນະ;
6. ທ່ານ ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ — ເປັນຄະນະ;
7. ທ່ານ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ — ເປັນຄະນະ;
8. ທ່ານ ຮອງລັດຖະມົນຕີກະຊວງສາທາລະນະສຸກ — ເປັນຄະນະ;
9. ທ່ານ ຮອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ — ເປັນຄະນະ.

**ມາດຕາ 2 :** ຄະນະກຳມະການ ດັ່ງກ່າວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍລັດຖະບານ ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳ ພ້ອມທັງສຶກສາຄົ້ນຄວ້າ ແລະ ສະເໜີປະກອບຄຳເຫັນຕໍ່ ບັນດານະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ນິຕິກຳ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ຊີ້ນຳການປະສານງານກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ພາກລັດ ແລະ ພາກທຸລະກິດຂັ້ນສູນກາງ ແລະ ທ້ອງຖິ່ນ, ເພື່ອພິຈາລະນາແກ້ໄຂບັນຫາ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ;

3. ຊີ້ນຳການປະສານງານກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ໃນການເຂົ້າຮ່ວມເຈລະຈາ ບັນດາສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ແລະ ເປັນຈຸດປະສານງານ ໃນການຊອກຫາແຫຼ່ງທຶນ ແລະ ຊ່ວຍເຫຼືອ ເພື່ອພັດທະນາວຽກງານອຳນວຍຄວາມສະດວກທາງດ້ານການຄ້າ;
4. ຄົ້ນຄວ້າ, ປັບປຸງຂັ້ນຕອນ ແລະ ມາດຕະການທາງດ້ານການຄ້າ ທີ່ບໍ່ແມ່ນພາສີ (Non-Tariff Measures: NTMs) ທີ່ຕິດພັນກັບການເຄື່ອນຍ້າຍສິນຄ້າ, ການນຳເຂົ້າ-ສົ່ງອອກ ແລະ ການຂົນສົ່ງສິນຄ້າຜ່ານແດນສາກົນ ໃຫ້ສອດຄ່ອງກັບບັນດາສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
5. ຊຸກຍູ້ ແລະ ສົ່ງເສີມ ການນຳໃຊ້ລະບົບເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ທັນສະໄໝ ເພື່ອເຊື່ອມໂຍງກັບສາກົນ;
6. ຊີ້ນຳ ແລະ ຊຸກຍູ້ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ທຸລະກິດ ເພື່ອຍົກສູງການຮ່ວມມືໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດ/ແຜນດຳເນີນງານ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ທີ່ວາງອອກໃນແຕ່ລະໄລຍະ, ພ້ອມທັງຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຊຸກຍູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ ປະກອບສ່ວນເຂົ້າໃນການປັບປຸງວຽກງານດັ່ງກ່າວ ໃຫ້ນັບມື້ນັບດີຂຶ້ນ;
7. ຄົ້ນຄວ້າ ແລະ ນຳສະເໜີໃຫ້ບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂບັນຫາ ແລະ ສິ່ງກີດຂວາງໃນການອຳນວຍຄວາມສະດວກທາງດ້ານການຄ້າ ໃຫ້ມີຄວາມເປັນເອກະພາບ, ສະດວກ, ວ່ອງໄວ, ກະທັດຮັດ, ໂປ່ງໃສ ແລະ ສອດຄ່ອງກັບ ລະບຽບກົດໝາຍຂອງ ສປປ ລາວ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
8. ຈັດກອງປະຊຸມຮ່ວມ ລະຫວ່າງ ຂັ້ນສູນກາງ ແລະ ຂັ້ນແຂວງ 02 ຄັ້ງຕໍ່ປີ ເພື່ອສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານຂໍທິດຊີ້ນຳຈາກລັດຖະບານ ໃນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ, ພ້ອມທັງຝຶກອົບຮົມ, ຍົກລະດັບ ແລະ ໂຄສະນາເຜີຍແຜ່ ໃຫ້ພາກລັດ ແລະ ພາກທຸລະກິດ ກ່ຽວກັບບັນດານິຕິກຳສັນຍາ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;
9. ຊີ້ນຳໃນການຂຶ້ນແຜນວຽກ, ແຜນງົບປະມານປະຈຳປີ ແລະ ນຳໃຊ້ພາຫະນະ, ອຸປະກອນຕ່າງໆ ທີ່ລັດຖະບານ ປະກອບໃຫ້ ເພື່ອນຳໃຊ້ເຂົ້າໃນວຽກງານອຳນວຍຄວາມສະດວກທາງດ້ານການຄ້າ;
10. ແຕ່ງຕັ້ງກອງເລຂາຊ່ວຍວຽກງານ ພ້ອມທັງກຳນົດສິດ ແລະ ໜ້າທີ່ ໃຫ້ລະອຽດ, ໂດຍໃຫ້ຖືເອົາຫ້ອງການປະຈຳ ຕັ້ງຢູ່ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກອງເລຂາ.
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 3 :** ແຕ່ງຕັ້ງຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງ ແລະ ນະຄອນຫຼວງ " ຄອຄຂ ", ຊຶ່ງປະກອບມີບັນດາທ່ານ ດັ່ງລຸ່ມນີ້:

1. ທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຜູ້ຊີ້ນຳວຽກງານເສດຖະກິດ — ເປັນຫົວໜ້າຄະນະ;
2. ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ — ເປັນຮອງຫົວໜ້າຄະນະ, ທັງເປັນຜູ້ປະຈຳການ;
3. ທ່ານ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ — ເປັນຮອງຫົວໜ້າຄະນະ;
4. ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ — ເປັນຮອງຫົວໜ້າຄະນະ;
5. ທ່ານ ຫົວໜ້າພະແນກສາທາລະນະສຸກ — ເປັນຮອງຫົວໜ້າຄະນະ;
6. ທ່ານ ຫົວໜ້າພະແນກວິທະຍາສາດ ແລະ ເຕັກໂນໂລຊີ — ເປັນຮອງຫົວໜ້າຄະນະ;
7. ທ່ານ ຫົວໜ້າກອງຄຸ້ມຄອງພາສີ ຫຼື ກອງກວດກາພາສີ ທີ່ມີສຳນັກງານຕັ້ງຢູ່ແຂວງ / ນະຄອນຫຼວງ — ເປັນຮອງຫົວໜ້າຄະນະ;

8. ທ່ານ ຮອງຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
9. ທ່ານ ຮອງຫົວໜ້າພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຄະນະ;
10. ທ່ານ ຮອງຫົວໜ້າພະແນກສ່ວຍສາອາກອນ ເປັນຄະນະ;
11. ທ່ານ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ ເປັນຄະນະ;
12. ທ່ານ ຮອງຫົວໜ້າພະແນກການເງິນ ເປັນຄະນະ;
13. ທ່ານ ຮອງຫົວໜ້າພະແນກການຕ່າງປະເທດ ເປັນຄະນະ;
14. ທ່ານ ຮອງຫົວໜ້າຫ້ອງວ່າການແຂວງ ແລະ ນະຄອນຫລວງ ເປັນຄະນະ;
15. ທ່ານ ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
16. ທ່ານ ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;
17. ທ່ານ ຮອງຫົວໜ້າພະແນກປ້ອງກັນເສດຖະກິດ ປກສ ເປັນຄະນະ;
18. ທ່ານ ຮອງຫົວໜ້າພະແນກຈາລະຈອນ ປກສ ເປັນຄະນະ;
19. ທ່ານ ຮອງປະທານສະພາການຄ້າ ແລະ ອຸດສາຫະກຳ ຂັ້ນແຂວງ ເປັນຄະນະ.

ມາດຕາ 4 : ຄະນະຂັ້ນແຂວງ ແລະ ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍຂັ້ນແຂວງ, ນະຄອນຫຼວງ ໃນການຕິດຕາມ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ບັນດານິຕິກຳ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ, ພ້ອມທັງຄົ້ນຄວ້າ ແລະ ສະເໜີປະກອບຄຳເຫັນບັນດານະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ນິຕິກຳ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
2. ເປັນຈຸດປະສານງານ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ຂັ້ນແຂວງ, ນະຄອນຫຼວງ ທັງພາກທຸລະກິດ ເພື່ອພິຈາລະນາແກ້ໄຂບັນຫາ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ;
3. ເປັນຈຸດປະສານງານ ໃນການຊອກຫາແຫຼ່ງທຶນ ແລະ ຊ່ວຍຊານ ເພື່ອພັດທະນາວຽກງານການອຳນວຍຄວາມສະດວກທາງດ້ານການຄ້າ;
4. ຄົ້ນຄວ້າ ແລະ ນຳສະເໜີປັບປຸງຂັ້ນຕອນ ແລະ ມາດຕະການທາງດ້ານການຄ້າ ທີ່ບໍ່ແມ່ນພາສີ (Non-Tariff Measures : NTMs) ທີ່ຕິດພັນກັບການເຄື່ອນຍ້າຍສິນຄ້າ, ການນຳເຂົ້າ-ສົ່ງອອກ ແລະ ການຂົນສົ່ງສິນຄ້າຜ່ານແດນສາກົນ ໃຫ້ສອດຄ່ອງກັບບັນດາສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
5. ຊີ້ນຳ, ຊຸກຍູ້, ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງ ໃຫ້ໄດ້ຮັບຜົນດີຂຶ້ນເປັນກ້າວໆ, ພ້ອມທັງສົ່ງເສີມການນຳໃຊ້ ລະບົບເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ທັນສະໄໝ ເພື່ອເຊື່ອມໂຍງກັບສາກົນ;
6. ເຂົ້າຮ່ວມກອງປະຊຸມຢູ່ ຂັ້ນສູນກາງ ເພື່ອສະຫຼຸບ, ຖອດຖອນບົດຮຽນ ແລະ ລາຍງານຂໍທິດຊີ້ນຳຈາກຄະນະນຳຂັ້ນແຂວງ ແລະ ຂັ້ນສູນກາງ ໃນການຈັດຕັ້ງປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຝຶກອົບຮົມ, ຍົກລະດັບ ແລະ ໂຄສະນາເຜີຍແຜ່ ໃຫ້ພາກລັດ ແລະ ພາກທຸລະກິດ ກ່ຽວກັບບັນດານິຕິກຳ, ສັນຍາ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;
7. ນຳສະເໜີ, ລາຍງານ ຄະນະນຳຂັ້ນແຂວງ ແລະ ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ ເພື່ອພິຈາລະນາ ສະເໜີສ້າງ ຫຼື ປັບປຸງ ບັນດານິຕິກຳ ທີ່ຕິດພັນກັບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງ;
8. ປະສານສົມທົບກັບ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ພາຍໃນຂັ້ນແຂວງ ເພື່ອຍົກສູງການຮ່ວມມື ໃນການຈັດຕັ້ງປະຕິບັດ ແຜນຍຸດທະສາດ/ແຜນດຳເນີນງານ ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ທີ່ວາງອອກ ແຕ່ລະໄລຍະ;

9. ຄົ້ນຄວ້າ ແລະ ນໍາສະເໜີ ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂບັນຫາ ແລະ ສິ່ງກີດຂວາງ ໃນການອໍານວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງໃຫ້ມີຄວາມເປັນເອກະພາບ, ສະດວກ, ວ່ອງໄວ, ກະທັດຮັດ, ໂປ່ງໃສ ແລະ ສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

10. ໃຫ້ຖືເອົາຫ້ອງການປະຈໍາຕັ້ງຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ/ນະຄອນຫຼວງ ເປັນກອງເລຂາຊ່ວຍວຽກ ແລະ ປະສານງານຊ່ວຍວຽກກ່ຽວຂ້ອງ ໃຫ້ແກ່ຄະນະດັ່ງກ່າວ;

11. ຂຶ້ນແຜນວຽກ ແລະ ງົບປະມານປະຈໍາປີ ເພື່ອນໍາສະເໜີ " ຄອຄສ " ຂັ້ນສູນກາງ ພິຈາລະນາອະນຸມັດນໍາໃຊ້ໃນວຽກງານອໍານວຍຄວາມສະດວກທາງດ້ານການຄ້າ;

12. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງ ຂັ້ນສູນກາງ.

ມາດຕາ 5 : ຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ແມ່ນການຈັດຕັ້ງທີ່ບໍ່ປະຈໍາການ, ຊຶ່ງຂຽນເປັນພາສາອັງກິດວ່າ National Trade Facilitation Committee ຂຽນຫຍໍ້ " NTFC ".

ມາດຕາ 6: ຕາປະທັບ

ຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ຂັ້ນແຂວງ, ນະຄອນຫຼວງ ແລະ ຂັ້ນສູນກາງ ມີຕາປະທັບສະເພາະ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານລັດຖະການຂອງຕົນ.

ມາດຕາ 7 : - ມອບໃຫ້ຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ໃນແຕ່ລະຂັ້ນ ປຶກສາຫາລື ເພື່ອກໍານົດຫຼັກການ ແລະ ແບບແຜນວິທີເຮັດວຽກ, ແບ່ງວຽກ ແບ່ງຄວາມຮັບຜິດຊອບ ພາຍໃນຄະນະໃຫ້ລະອຽດຈະແຈ້ງ ພ້ອມທັງຊີ້ນໍາການເຄື່ອນໄຫວວຽກງານຂອງກອງເລຂາ ຕາມສິດ ແລະ ໜ້າທີ່ໄດ້ກໍານົດໃນ ມາດຕາ 2;

- ມອບໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງ ແລະ ແຂວງ ແຕ່ງຕັ້ງຜູ້ຕາງໜ້າຂອງຕົນທີ່ຮັບຜິດຊອບວຽກງານ ທີ່ກ່ຽວຂ້ອງດັ່ງກ່າວ ເພື່ອປະກອບເຂົ້າໃນຄະນະ ຕາມທີ່ໄດ້ກໍານົດໃນມາດຕາ 1 ແລະ ມາດຕາ 3 ແລ້ວແຈ້ງໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເພື່ອຊາບ.

ມາດຕາ 8 : ງົບປະມານການເຄື່ອນໄຫວຂອງຄະນະດັ່ງກ່າວ ໃນໄລຍະແຕ່ປີ 2018-2022 ແມ່ນນໍາໃຊ້ງົບປະມານຂອງໂຄງການ Lao PDR Competitiveness and Trade Project ທີ່ທະນາຄານໂລກ ແລະ ຄູ່ຮ່ວມພັດທະນາໃຫ້ການສະໜັບສະໜູນ. ພາຍຫຼັງສິ້ນສຸດໂຄງການ ແມ່ນນໍາໃຊ້ງົບປະມານຂອງລັດຖະບານ ໂດຍໃຫ້ຄະນະດັ່ງກ່າວ ຂຶ້ນແຜນງົບປະມານບ່ອນບໍລິຫານປົກກະຕິ.

ມາດຕາ 9 : ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ ແລະ ທຸກພາກສ່ວນກ່ຽວຂ້ອງ ພ້ອມດ້ວຍບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 10 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ສ່ວນຂໍ້ຕົກລົງອື່ນໆ ທີ່ມີຜ່ານມາ ແລະ ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ